# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

### ວັນອາທິດ ທີ 08 ກໍຣະກົດ 2007 ( 07-08-2007 )

---

## <u>ສແວງຫາການຮັບໃຊ້:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ກິຈການ 6:1-7; 9:36-40; 11:29-30

**<u>ຄໍາຖາມແຫ່ງຊີວິດ:</u>** ພຣະເຈົ້າຢາກໃຫ້ຂ້ອຍເຮັດຫຍັງຢູ່ໃນໂບດ?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພຣະເຈົ້າຊົງຮຽກເອີ້ນພວກເຮົາແຕ່ລະຄົນ ໃຫ້ໃຊ້ຂອງພຣະຣາຊທານ ແລະຄວາມສາມາດ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ຂຽນຂຶ້ນມາເພື່ອຊ່ອຍທ່ານໃຫ້ເຮັດພາກສ່ວນຂອງທ່ານໃນໂບດຕາມພຣະປະສົງຂອງພຣະເຈົ້າໂດຍ:

- ເຊື່ອໝັ້ນໃນການຮຽກເອີ້ນຂອງພຣະເຈົ້າເພື່ອຮັບໃຊ້ຮ່ວມກັບພຣະກາຍຂອງພຣະຄຣິດແລະ
- ໃຊ້ຂອງພຣະຣາຊທານ ແລະຄວາມຊໍານານທີ່ພຣະເຈົ້າໄດ້ປະທານໃຫ້ເພື່ອຮັບໃຊ້ຮ່ວມກັບພຣະກາຍຂອງພຣະຄຣິດໃນທາງໃດທາງນຶ່ງ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "<u>ແຜນການສອນ</u>", ຫມາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ອະທິບາຍ:</u>** - ການຮັບໃຊ້ນັ້ນບໍ່ໝາຍຄວາມວ່າເປັນສິ່ງເລັກນ້ອຍ, ເມື່ອມີຈໍານວນຜູ້ຮັບໃຊ້ຫລາຍຂຶ້ນຈຶ່ງເຮັດໃຫ້ການປະກາດພຣະທັມຂຍາຍອອກຢ່າງວ່ອງໄວ.

- ນັ້ນເປັນຈຸດຊຶ່ງຊີ້ໃຫ້ເຫັນສາເຫດທີ່ພຣະເຈົ້າໄດ້ປະທານພອນສວັນ, ຄວາມສາມາດ ແລະຄວາມຊໍານານໃຫ້ເປັນປໂຍດແກ່ແຕ່ລະຄົນ, ຊຶ່ງບໍ່ແມ່ນເພື່ອຕົນເອງເທົ່ານັ້ນ, ແຕ່ແມ່ນເພື່ອຄົນອື່ນດ້ວຍ.

## 1. <u>ເຮົາສາມາດຮັບໃຊ້ໃນວຽກງານທີ່ແຕກຕ່າງກັນ:</u> ກິຈການ 6:1-7

1) ຂໍໃຫ້ນັກຮຽນອາສາສມັກອ່ານ ກິຈການ 6:1-7

2) ຂຽນການຮັບໃຊ້ສອງຢ່າງນີ້ໃສ່ກະດານຄື: **1. ການຮັບໃຊ້ຢູ່ໃນໂບດ. 2. ການຮັບໃຊ້ຢູ່ນອກໂບດ.** ເພື່ອໃຫ້ນັກຮຽນສາມາດສ້າງຂໍ້ຄວນຄິດຂຶ້ນມາເພື່ອນໍາໄປປະຕິບັດຮັບໃຊ້.

3) ໃຫ້ຕຶກຕອງເບິ່ງໃນການດໍາເນີນຊີວິດທັມມະດາທີ່ປາສະຈາກເອົາທັມມະຊາດຕ່າງ ໆ ມາສນັບສນູນແລ້ວ ການທໍາງານຈະພົບຄວາມຫຍຸ້ງຍາກຫລາຍປານໃດ.

4) ຄວາມສໍາຄັນຄື: ໜ້າທີ່ການງານທີ່ພຣະເຈົ້າມອບໝາຍໃຫ້ທຸກຄົນນັ້ນບໍ່ແມ່ນໜ້າທີ່ທີ່ຕໍ່າຕ້ອຍ, ໃຫ້ທຸກຄົນ ສາມາດເຮັດຫລ້ອນໜ້າທີ່ຂອງຕົນດ້ວຍຄວາມເຊື່ອຢ່າງສຸດຈິດສຸດໃຈເພື່ອເປັນການຖວາຍກຽດແດ່ພຣະເຈົ້າ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ກິຈການ 6:1-7

1. ຫລັງຈາກທ່ານໄດ້ຮຽນພຣະຄັມພີຕອນນີ້ແລ້ວມັນຂັດແຍ້ງກັບການຕັດສິນໃຈຮັບໃຊ້ຂອງທ່ານຫລືບໍ່?
2. ເຮັດແນວໃດພວກເຮົາຈຶ່ງຈະເຂົ້າໃຈການສັມຜັດຈາກພຣະວິນຍານ?
3) ທ່ານຈະເຮັດແນວໃດເພື່ອໃຫ້ທ່ານມີຄຸນນະພາບດີຂຶ້ນເພື່ອຕຽມພ້ອມທີ່ຈະຮັບການຮຽກເອີ້ນໃຫ້ຮັບໃຊ້ ໃນຂັ້ນຕໍ່ໄປ?
4. ໃນໂບດຂອງທ່ານ ທ່ານໄດ້ເຮັດພາຣະໜ້າທີ່ການຮັບໃຊ້ໄດ້ນ້ອຍຫລາຍຊໍ່າໃດແລ້ວ?
5. ຖ້າຍັງ ທ່ານຈະກໍ່ຕັ້ງຣະບຽບການຮັບໃຊ້ແກ່ຜູ້ທີ່ເຊື່ອໃຫ້ຮັບໃຊ້ພຣະຜູ້ເປັນເຈົ້າໂດຍວິທີໃດ?

## 2. <u>ເຮົາສາມາດຮັບໃຊ້ຕາມຄວາມສາມາດຂອງເຮົາ:</u> (ກິຈການ9:36-40 )

1) ຂໍໃຫ້ອາສາສມັກອ່ານພຣະທັມ ກິຈການ 9:36-40

**ແນະນໍາ:** ຄຣິສຕຽນເປັນຜູ້ທີ່ໄດ້ຮັບຄວາມລອດພົ້ນ ແລ້ວກໍໃຫ້ຮັບໃຊ້ພຣະຜູ້ເປັນເຈົ້າໂດຍ: ການຊ່ອຍເຫລືອ ຊຶ່ງກັນ ແລະກັນ.

2) ພຣະເຈົ້າໄດ້ໃຫ້ຄວາມສາມາດ ແລະໂອກາດການຮັບໃຊ້ແກ່ລູກ ໆ ຂອງພຣະອົງ ເຂົາທັງຫລາຍຈະຖວາຍ ພຣະກຽດແດ່ພຣະອົງ ແລະຊ່ອຍເຫລືອຊຶ່ງກັນ ແລະກັນ,

3) ໃນຂໍ້ 39. ເສື້ອຜ້າຂອງນາງໂດຣະກາບໍ່ແມ່ນຄວາມສາມາດຂອງລາວ, ແຕ່ເປັນການບົ່ງບອກເຖິງ ສີມືຂອງລາວທີ່ເຮັດຂຶ້ນມາໄດ້ ແລະເສື້ອທີ່ນາງເຮັດນັ້ນໃຜ ໆ ກໍມັກ ແລະຢາກໄດ້..

4) ຖ້າໝົດທຸກຄົນໃນໂລກຫາກເປັນຄຣິສຕຽນແລ້ວພວກມິດຊັນນາຣີຊິບໍ່ໄດ້ຮັບຂອງຖວາຍເປັນຣົດ ໄອບີເອມ ( IBM) ແທນຜ້າພັນຄໍໄໝພຸ້ນບໍ? ຜູ້ທີ່ເປັນຊ່າງເຮັດຍົນ ( ເຄື່ອງບິນ)ກໍຈະສົ່ງສິ່ງທີ່ເຂົາຜລິດໃຫ້ແກ່ມິດຊັນນາຣີ ໃຊ້ໃນການປະກາດຄືກັນ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ກິຈການ 9:36-40

1. ໃນການຊ່ອຍເຫລືອໃນດ້ານໃດທີ່ທ່ານຈະຮັບໃຊ້ຕໍ່ໄປ?
2. ການຮັບໃຊ້ປະເພດໃດທີ່ທ່ານຢາກເຮົາເຮັດ? ເປັນເພາະເຫດໃດ?
3. ຖ້າທ່ານຈົດຈໍ່ຢູ່ທີ່ການເຮັດວຽກຊ່ອຍເຫລືອ ແຕ່ບໍ່ຢູ່ໃນພຣະເຈົ້າແລ້ວທ່ານຈະສາມາດປ່ຽນແປງໄດ້ຢ່າງໃດ?
4. ລັກສະນະພິເສດ ແລະນິຜົນໃນການຊ່ອຍເຫລືອທີ່ທ່ານເຫັນວ່າເປັນປໂຍດແລະໄດ້ຜົນຕໍ່ການຖວາຍກຽດ ແດ່ພຣະເຈົ້າ?
5. ຈະນໍາມາໝູນໃຊ້ ຫລືແກ້ໄຂດັດແປງໃຊ້ໃນໂບດຂອງທ່ານໄດ້ຫລືບໍ່?

## 3. <u>ເຮົາສາມາດຮັບໃຊ້ໄດ້ດ້ວຍການເອົາໃຫ້:</u> ກິຈການ 11:29-30

1) ຂໍໃຫ້ນັກຮຽນອາສາສມັກອ່ານ ກິຈການ 11:29-30

**ອະທິບາຍ:** ເຫດຜົນໃນການຮີບໂຮມສິ່ງຂອງເພື່ອບັນເທົາທຸກຜູ້ຍາກຈົນນັ້ນໄດ້ເກີດມີຂຶ້ນໃນຄຣິສຕະຈັກກຸງ ເຢຣູຊາເລັມ ເປັນການຄາດໝາຍທີ່ຈະມີການອຶດຢາກຂາດເຂີນເກີດຂຶ້ນ ເໝືອນໃນສມັຍຈັກກະພັດລາວດີໂອ ໃນຂໍ້ທີ 8.

2) ສົນທະນາກັນໃນເຣື່ອງການສັ່ງສອນຂອງພຣະເຢຊູຄຣິດໃນເຣື່ອງການ "ເອົາໃຫ້" ນັ້ນວ່າຢ່າງໃດ? ແລະ ໃຫ້ທຸກຄົນສໍາຣວດເບິ່ງການເອົາໃຫ້ຂອງຕົນວ່າຕົນໄດ້ເອົາໃຫ້ຢ່າງຖືກຕ້ອງແລ້ວບໍ່?

3) ການເອົາໃຫ້ນັ້ນທ່ານສາມາດເອົາ ເງິນ, ອາຫານ, ເຄື່ອງໃຊ້, ເວລາ, ອຸປກອນ ແລະອື່ນ ໆ ແມ້ກະທັ້ງ ເຮັດບາງສິ່ງບາງຢ່າງໃຫ້ແກ່ຄົນອື່ນຕາມທີ່ເຂົາຕ້ອງການກໍໄດ້. (ຂໍ້ທີ 29 )

4) ທ່ານວ່າທ່ານບາຣະນາບາ ແລະທ່ານໂຊໂລໄດ້ໃຫ້ຫຍັງ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ກິຈການ 11:29-30

1. ສ່ວນຫລາຍທ່ານໄດ້ເອົາຫຍັງໃຫ້ ຫລືໄປຊ່ອຍກອງບັນເທົາທຸກແຈກຢາຍສິ່ງຂອງຕ່າງ ໆໃຫ້ແກ່ຜູ້ຕ້ອງການ?
2. ຄວາມເດືອດຮ້ອນອັນໃດທີ່ທ່ານມີຢູ່ໃນຄອບຄົວຂອງທ່ານ?
3. ໃນໂບດຂອງທ່ານເດຕ້ອງການຫຍັງແດ່ທີ່ຈໍາເປັນ?
4. ທ່ານມີແຜນການແນວໃດທີ່ຈະຊ່ອຍບັນເທົາໃນໂບດຂອງທ່ານໃຫ້ດີຂຶ້ນ?
5. ທ່ານຄວນຈະຊ່ອຍໃຫ້ຄົນທີ່ຢູ່ຮອບຂ້າງທ່ານມີຈິດໃຈຢາກຖວາຍ ຫລືເອົາໃຫ້ ແລະສນັບສນູນສົ່ງເສີມການບັນ ເທົາທຸກຢ່າງໃດ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ພຣະເຈົ້າໄດ້ຊ່ອຍເຫລືອພວກເຮົາທຸກ ໆ ຄົນ.
- ພຣະເຈົ້າຢາກໃຊ້ພວກເຮົາໃຫ້ມອງເຫັນຄວາມຕ້ອງການຊຶ່ງກັນ ແລະກັນຢູ່ໃນໂບດ ຖ້າເປັນການຊ່ອຍກໍ ໃຫ້ຊ່ອຍດ້ວຍຄວາມເຕັມໃຈ ດ້ວຍຄວາມຮັກແທ້ ໆ.
- ການຮັບໃຊ້ພຣະເຈົ້າຜ່ານທາງການເອົາໃຫ້ກໍເປັນການສະແດງອອກເຖິງການເຊື່ອຟັງພຣະເຈົ້າ, ແຕ່ກໍເປັນ ປໂຍດຢ່າງລົ້ນເຫລືອໂດຍ: ພຣະຜູ້ເປັນເຈົ້າໃຊ້ໃຫ້ຜູ້ທີ່ເຊື່ອທັງຫລາຍອວຍພອນໃຫ້ກັນ ແລະກັນດ້ວຍ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH